Key : C
Slow Rock = 68

# ເຮືອຮັກເຮືອສລາຍ

ເນື້ອຮ້ອງ&ທຳນອງ:
ພອນ ພະຫົງຈັນ

໑- ພາບແຫ່ງຄວາມຫຼັງ    ຝັງໃຈນ້ອງບໍ່ລືມ
ພາບທີ່ດູດດື່ມ    ເຮົາສອງເຄີຍຄຽງຄູ່ກັນ
ນ້ອງຍັງຫຼັບໄຫຼ    ໃນໂລກແຫ່ງຄວາມຝັນ
ເຮົາເຄີຍສາບານ    ຈະຮັກກັນເລື້ອຍໄປ ...

໒- ເຮືອຮັກເຮົາສອງ    ລ່ອງລອຍຢູ່ບົນສວັນ
ຮັກສຸດແສນຫວານ    ຮັກນັ້ນຊາບຊຶ້ງຊວງໃນ
ເຮົາເຄີຍສຸກສັນ    ບົນວິມານທີ່ແຈ່ມໃສ
ບໍ່ອາດລືມໄລ    ດ້ວຍໃຈທີ່ໃຝ່ປອງ .

*/ *ນ້ອງສຸດຈະເຫງົາ    ເຮືອຮັກເຮົາຕ້ອງຈົມຫາຍ*
*ຮັກຖືກທຳລາຍ    ຫາຍໄປກັບຄື້ນຟອງ*
*ເຮືອຮັກນ້ອງຫຼົ້ມ    ຈົມລົງສູ່ໃຕ້ແມ່ຂອງ*
*ອ້າຍບໍ່ຫຼຽວມອງ    ເຮືອຮັກນ້ອງຈຶ່ງສລາຍ ...*

໓- ບໍ່ເຄີຍນຶກຝັນ    ອ້າຍນັ້ນຈະມາປ່ຽນແປງ
ເຄີຍຮັກເຄີຍແພງ    ອ້າຍແກ້ງຂ້ານ້ອງໃຫ້ຕາຍ
ຍາມອ້າຍເອີ່ຍຄຳ    ວ່າມີຍິງໃໝ່ແນບກາຍ
ເຮືອຮັກນ້ອງແຕກສລາຍ    ຈົມຫາຍໃຕ້ທ້ອງທາຣາ .

© Studio DAVONG - 2003

Key : C
Cha Cha Cha = 128

# ຄືນເຝົ້າຄອຍ

ເນື້ອຮ້ອງ&ທຳນອງ:
ພອນ ພະຫົງຈັນ

໑- ຈະຫຼັບຕາລົງ ປົງໃຈໄດ້ຢ່າງໃດ
ເມື່ອຫົວໃຈ ຍັງຄິດເຖິງໃຜຄົນນຶ່ງ
ຄົນເຄີຍບອກຮັກ ປັກໃຈສຸດຊາບຊຶ້ງ
ວັນນຶ່ງນັ້ນ ເຮົາເຄີຍສັນຍາຮັກຮ່ວມໃຈ ...

໒- ເມື່ມອງເດືອນດາວ ແວວວາວຢູ່ບົນນະພາ
ສຸດເສົ້າອຸຣາ ນ້ຳຕາມັນລິນຫຼັ່ງໄຫຼ
ເຈັບປວດຊອກຊ້ຳ ຣະກຳເປັນແຜໃຈ
ນ້ອງເຫີນຫ່າງໄກ ໄປແລ້ວໜີບໍ່ຫວນມາ .

*/ *ປ່ອຍໃຫ້ຄອຍ ຄອຍແລ້ວຫຼາຍປີຜ່ານໄປ*
*ໂຖ ! ຂວັນໃຈ ລືມໄດ້ຄຳໝັ້ນສັນຍາ*
*ຫຼືມີຄູ່ໃໝ່ ວອນນ້ອງໃຫ້ກັບຄືນມາ*
*ບອກໃຫ້ຮູ້ວ່າ ບອກຄຳອຳລາພຽງຄຳດຽວ ...*

໓- ວອນນ້ອງໄປດີ ມີຄູ່ຢູ່ສຸກສົມໃຈ
ຈາກນີ້ຕໍ່ໄປ ບໍ່ໃກ້ບໍ່ຂໍຂ້ອງກ່ຽວ
ວອນນ້ອງຈົດຈຳ ຈຳໄວ້ພຽງຄຳດຽວ
ຂໍຢ່າໃຈລ້ຽວ ຫຽວຫຼອກຊາຍອື່ນຕໍ່ໄປ .

© Studio DAVONG - 2003

Key : C
Rock Madison = 136

# <u>ສົ່ງໃຈໄປກັບສາຍລົມ</u>

ເນື້ອຮ້ອງ&ທຳນອງ:
ພອນ ພະຫົງຈັນ

໑- ສາຍລົມພັດວີວ　　　ພັດປີວໃບໄມ້ບິນໄປ
ລົມພັດຂວັນໃຈ　　　ຂອງເຮົາຫຼົ່ນຫາຍໄປໃສ
ໂອ້...ຣະດູການ　　　ໜາວສທ້ານເຂົ້າເຖິງຊວງໃນ
ເຄີຍຊົມລົມພັດໄປ　　　ພາໃຈເຮົາຊື່ນກາຍາ ...

໒- ໂອ້...ລົມໜາວເອີຍ　　　ເຈົ້າເຄີຍພາເຮົາສຸກສັນ
ລົມພັດປ່ຽນຜັນ　　　ໜາວລົມຫວນກັບຄືນມາ
ໜາວນີ້ພາເສົ້າ　　　ນັ່ງເຫງົາເສົ້າໝອງອຸຣາ
ໜາວນີ້ບໍ່ມີຂວັນຕາ　　　ເຈົ້າຈາກລາໄປກັບສາຍລົມ .

*/ *ຂໍວອງຟ້າດິນ　　　ອິນພົມຊ່ວຍລົມພັດພາ*
*ພັດເຂົາກັບຄືນມາ　　　ພາໃຫ້ໜາວນີ້ສຸກສົມ ...*

໓- ເຫັນໃຈເຖີດລົມ　　　ຢ່າທຳໃຫ້ໃຈຂື່ນຂົມ
ຟັງສຽງລົມພັດມາ　　　ນ້ຳຕາມັນລິນຫຼັ່ງໄຫຼ
ໂຖ້...ຂວັນຕາ　　　ຢ່າລືມສັນຍາຣ່ວມໃຈ
ອ້າຍຢູ່ແຫ່ງຫົນໃດ　　　ຂໍສົ່ງໃຈໄປກັບສາຍລົມ .

(Instruments & back from beginning)

<u>Coda</u> : ໜາວລົມຜ່ານໄປ　　　ໜາວຟ້າກໍຜ່ານມາ
ອ້າຍຈິ່ງຫວນຄືນມາ　　　ໜ້າໜາວອົບອຸ່ນຫົວໃຈ ...

© Studio DAVONG - 2003

Key : C
Madison = 126

ເນື້ອຮ້ອງ&ທຳນອງ:
ພອນ ພະຫົງຈັນ

# ພັທນາຈິດໃຈ

໑- ເຊີນມາ　　　　ມາຮ່ວມສຸກສັນ
ມາຮ່ວມສຳພັນ　　　　ຮັກກັນໄວ້ເຖີດໜາ
ເຊີນມາ　　　　ມາສ້າງພັທນາ
ບຸນວາສນາ　　　　ບາຣະມີຈະຍູ້ສົ່ງ ...

໒- ໂຊກດີ　　　　ໄດ້ເກີດເປັນຄົນ
ມັ່ງມີຫຼືຈົນ　　　　ທຳໃຈໃຫ້ໝັ້ນຄົງ
ທຳດີໄປ　　　　ຈະເກີດບັນຈົງ
ໄດ້ດັ່ງປຣະສົງ　　　　ບຸນນຳພາຊ່ວຍຄຸ້ມຄອງ .

*/ *ຈະຢູ່　　　　ແຫ່ງໃດກໍຕາມ*
*ຢ່າທຳບາບກັມ　　　　ກັມນັ້ນຈະຕາມສນອງ*
*ຊີວິດອັບເສົາ　　　　ໃນໃຈເສົ້າໝອງ*
*ເກາະກິນໃຈໝອງ　　　　ຄືນວັນຫວັ່ນຜວາ ...*

໓- ຫາກຫວັງ　　　　ສິ່ງໃດກໍຕາມ
ບໍ່ເທົ່າຄວາມງາມ　　　　ນ້ຳໃຈບຸນດອກໜາ
ທຳດີໄປ　　　　ສບາຍອຸຣາ
ບໍ່ເສົ້າຊີວາ　　　　ບຸນນຳພາຊີວິດສ່ອງໃສ .

© Studio DAVONG - 2003